ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0060/ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 12 JAN 2017

# ຂໍ້ຕົກລົງ
# ວ່າດ້ວຍທຸລະກິດຂາຍກົງ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013.
- ອີງຕາມກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 2/ສພຊ, ລົງວັນທີ 30 ມິຖຸນາ 2010.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມການສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0013/ກຄພນ, ລົງວັນທີ 04 ມັງກອນ 2017.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ເພື່ອຄຸ້ມຄອງ ການດຳເນີນທຸລະກິດຂາຍກົງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ສ້າງຄວາມສະດວກໃນການຈຳໜ່າຍສິນຄ້າ ເພື່ອຮັບໃຊ້ສັງຄົມ, ປົກປ້ອງຜົນປະໂຫຍດລວມຂອງຊາດ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້, ຜູ້ຂາຍອິດສະຫຼະ, ຕົວແທນຂາຍກົງ ແລະ ຜູ້ດຳເນີນທຸລະກິດຂາຍກົງ, ປະກອບສ່ວນສ້າງວຽກເຮັດງານທຳ, ສ້າງລາຍໄດ້ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

### ມາດຕາ 2 ທຸລະກິດຂາຍກົງ

ທຸລະກິດຂາຍກົງ ແມ່ນການດຳເນີນທຸລະກິດ ຂາຍສິນຄ້າ ໃນລັກສະນະການນຳສະເໜີຂາຍໂດຍກົງ ຕໍ່ຜູ້ຊົມໃຊ້ ເຖິງທີ່ຢູ່ອາໄສ ແລະ ສະຖານທີ່ຕ່າງໆ.

ມາດຕາ 3 ອະທິບາຍຄໍາສັບ

ຄໍາສັບຕ່າງໆໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ຜູ້ຊົມໃຊ້ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້ ແລະ ນໍາໃຊ້ສິນຄ້າ ແລະ ການບໍລິການ ຢ່າງຖືກຕ້ອງໂດຍບໍ່ມີຈຸດປະສົງທາງການຄ້າ;
2. ຜູ້ດໍາເນີນທຸລະກິດຂາຍກົງ ໝາຍເຖິງ ຫົວໜ່ວຍທຸລະກິດ ທີ່ສະໜອງສິນຄ້າໃຫ້ແກ່ຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ;
3. ຫົວໜ່ວຍທຸລະກິດ ໝາຍເຖິງ ວິສາຫະກິດ ຫຼື ການຈັດຕັ້ງທຸລະກິດຂອງ ບຸກຄົນ ຫຼື ນິຕິບຸກຄົນ ຊຶ່ງປະກອບດ້ວຍຊື່, ທຶນ, ການບໍລິຫານຈັດການ, ສໍານັກງານ ແລະ ໄດ້ຂຶ້ນທະບຽນຕາມກົດໝາຍວ່າດ້ວຍ ວິສາຫະກິດ.
4. ຕົວແທນຂາຍກົງ ໝາຍເຖິງ ຜູ້ທີ່ສະໜອງສິນຄ້າ ໃຫ້ແກ່ຜູ້ຂາຍອິດສະຫຼະ ຫຼື ຂາຍສິນຄ້າໂດຍກົງໃຫ້ຜູ້ຊົມໃຊ້;
5. ຜູ້ຂາຍອິດສະຫຼະ ໝາຍເຖິງ ຜູ້ທີ່ຂາຍສິນຄ້າໂດຍກົງໃຫ້ແກ່ ຜູ້ຊົມໃຊ້;
6. ແຜນການຈ່າຍຄ່າຕອບແທນ ໝາຍເຖິງ ແຜນການຕະຫຼາດ ຫຼື ແຜນການທີ່ຜູ້ດໍາເນີນທຸລະກິດຂາຍກົງສ້າງຂຶ້ນເພື່ອກໍານົດວິທີການຈ່າຍຄ່າຕອບແທນໃຫ້ສະມາຊິກ ໂດຍລະບຸວິທີການຈ່າຍຢ່າງຊັດເຈນ;
7. ຄວາມລັບທາງທຸລະກິດ ໝາຍເຖິງ ຂໍ້ມູນກ່ຽວກັບກໍາມະວິທີ, ວິທີການຜະລິດ, ການດໍາເນີນທຸລະກິດ ຫຼື ການບໍລິການ ເຊິ່ງມີຄວາມສໍາຄັນຕໍ່ການດໍາເນີນທຸລະກິດ;
8. ເງິນຄໍ້າປະກັນໃນການດໍາເນີນທຸລະກິດຂາຍກົງ ໝາຍເຖິງ ຈໍານວນເງິນທີ່ຜູ້ດໍາເນີນທຸລະກິດຂາຍກົງນໍາມາຄໍ້າປະກັນໃນການເຄື່ອນໄຫວທຸລະກິດຂາຍກົງ ເພື່ອຮັບປະກັນຕໍ່ກັບຜູ້ທີ່ເຂົ້າຮ່ວມທຸລະກິດຂາຍກົງ.

ມາດຕາ 4 ຫຼັກການພື້ນຖານກ່ຽວກັບການດໍາເນີນທຸລະກິດຂາຍກົງ

ການດໍາເນີນທຸລະກິດຂາຍກົງ ຢູ່ ສປປ ລາວ ຕ້ອງປະຕິບັດຕາມຫລັກການພື້ນຖານຕົ້ນຕໍ ດັ່ງນີ້:

1. ຮັບປະກັນການຈໍາໜ່າຍສິນຄ້າໃຫ້ມີຄຸນນະພາບ, ໄດ້ມາດຕະຖານ ຕາມທີ່ອົງການຮັບຜິດຊອບ ແລະ ຄຸ້ມຄອງກໍານົດໄວ້;
2. ຮັບປະກັນຄວາມປອດໄພທາງດ້ານຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຊົມໃຊ້;
3. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ຄວາມຍຸຕິທໍາ ໃນການປະຕິບັດສັນຍາຈ່າຍຄ່າຕອບແທນ;
4. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ສັງຄົມ ໃນການຕິດຕາມ, ກວດກາ ການດໍາເນີນທຸລະກິດຂາຍກົງ;
5. ຮັບປະກັນການແຂ່ງຂັນທາງທຸລະກິດທີ່ເປັນທໍາ;